multicultural communication

Lao
01.06. 2002
[BHC-6115]

## ການສັກຢາຕ່າງໆໃຫ້ເດັກເກີດໃໝ່ທັງຫຼາຍ - ເປັນຫຍັງການສັກຢາພວກນີ້ຈຶ່ງສຳຄັນ
## Injections for newborn babies – why they're important

ຜູ້ເປັນພໍ່ແມ່ທັງຫຼາຍຈຳເປັນຕ້ອງຮູ້ກ່ຽວກັບການສັກຢາສອງຢ່າງສຳລັບເດັກນ້ອຍເກີດໃໝ່ທັງຫຼາຍ. ອັນນຶ່ງແມ່ນການສັກຢາມີແຮງພິເສດແບວ K (Vitamin K). ອັນນີ້ຊ່ວຍປ້ອງກັນອາການຂັດຕໍ່ທຳມະຊາດຮ່າງກາຍອັນບໍ່ຄ່ອຍມີແຕ່ວ່າຮ້າຍແຮງ ທີ່ຮ້ອງວ່າການມີເລືອດອອກບໍ່ຢຸດຂາດຢາມີແຮງແບວ K (Vitamin K Deficiency Bleeding ຫຼືວ່າ VKDB). ການສັກຢາອັນນຶ່ງອີກແມ່ນປ້ອງກັນເດັກເກີດໃໝ່ທັງຫຼາຍຕໍ່ພະຍາດຕັບ, ຕັບອັກເສບເຊື້ອ B (hepatitis B). ເດັກເກີດໃໝ່ທັງຫຼາຍສາມາດຮັບການສັກຢາໝົດທັງສອງໄດ້ຢູ່ໃນໂຮງໝໍຫຼັງຈາກພວກເຂົາເກີດ. ການສັກຢາທັງຫຼາຍຢູ່ຕາມໂຮງໝໍສາທາລະນະທົ່ວໄປແມ່ນບໍ່ໄດ້ເສັຽເງິນ.

**ເປັນຫຍັງເດັກເກີດໃໝ່ທັງຫຼາຍຈຶ່ງຕ້ອງການຢາມີແຮງແບວ K (vitamin K)?**
ໂດຍບໍ່ມີ**ຢາມີແຮງແບວ K (vitamin K) ພຽງພໍ, ເດັກເກີດໃໝ່ສ່ຽງໄພມີອາການເລືອດອອກບໍ່ຢຸດ** VKDB. ນີ້ອາດສາມາດເຮັດໃຫ້ມີເລືອດອອກຢ່າງຮ້າຍແຮງ ທີ່ອາດມີການກ່ຽວພັນເຖິງສມອງ.

**ເດັກເກີດໃໝ່ໝົດທຸກໆຄົນຕ້ອງການຢາມີແຮງແບວ K (vitamin K) ທັງໝົດບໍ?**
ແມ່ນແລ້ວ. **ເດັກເກີດໃໝ່ທັງຫຼາຍອາດບໍ່ມີຢາມີແຮງແບວ K (vitamin K) ພຽງພໍໃນຮ່າງກາຍຂອງພວກເຂົາ ເພື່ອປ້ອງກັນອາການເລືອດອອກບໍ່ຢຸດ** VKDB. ແຕ່ວ່າບາດໄກ້ຮອດອາຍຸຫົກເດືອນແລ້ວ, ພວກເຂົາສ່ວນມາກຜະລິດບັນຈຸຂອງພວກເຂົາເອງໄດ້.

**ຢາມີແຮງແບວ K (vitamin K) ເອົາໃຫ້ດ້ວຍການສັກເອົາຕະຫຼອດບໍ່?**
ຢານີ້ສາມາດເອົາໃຫ້**ດ້ວຍການສັກຫຼືວ່າກິນເອົາທາງປາກໄດ້. ການສັກເອົາແມ່ນສະດວກກວ່າ ເພາະວ່າແມ່ນພຽງແຕ່ປະລິມານດຽວພຽງເທົ່ານັ້ນ ແລະກຸ້ມໄປໄດ້ຫຼາຍເດືອນ.**

ເດັກເກີດໃໝ່ທັງຫຼາຍຕ້ອງການສັກຢາອັນນີ້ຖ້າວ່າ:

- ພວກເຂົາເກີດກ່ອນກຳນົດ ຫຼືວ່າບໍ່ສະບາຍ
- ຜູ້ເປັນແມ່ພວກເຂົາໄດ້ກິນຢາດີຊັກບ້າໝູ, ເລືອດຕັນຫຼືວ່າວັນນະໂຣກປອດ (TB) ຕ່ອນຖືພາ. (ບອກທ່ານໝໍຫຼືວ່ານາງໝໍຜະດຸ້ງຄັນຂອງທ່ານຖ້າວ່າທ່ານກິນຢາອັນໃດອັນນຶ່ງເຫຼົ່ານີ້)

**ຢາມີແຮງແບວ K (vitamin K) ສາມາດເອົາໃຫ້ທາງປາກໄດ້ ແຕ່ວ່າຜົນບັງເກີດນັ້ນກຸ້ມບໍ່ໄດ້ດົນ. ໝາຍຄວາມວ່າເດັກເກີດໃໝ່ນັ້ນຈະຕ້ອງໄດ້ປະລິມານຢາໄປເຖິງສາມລະຍະ:**

- ຕ່ອນເກີດ

- ຕ່ອນໄດ້ສາມຫຼືວ່າຫ້າມື້ຫຼັງຈາກເກີດ
- ຕ່ອນອາຍຸໄດ້ສີ່ອາທິດ

**ໝາຍເຫດ:**
**ປະລິມານເທື່ອທີສາມແມ່ນສຳຄັນທີ່ສຸດສຳລັບຜູ້ເປັນພໍ່ແມ່ທັງຫຼາຍທີ່ຈະຕ້ອງໄດ້ຈື່ຈຳໃຫ້ໄດ້! ຖ້າບໍ່ມີປະລິມານນີ້, ເດັກເກີດໃໝ່ນັ້ນອາດຈະບໍ່ໄດ້ຖືກປ້ອງກັນເຕັມສ່ວນ.**
ປະລິມານອັນໃດອັນນຶ່ງຈຳເປັນຕ້ອງໄດ້ເອົາໃຫ້ຊ້ຳອີກ ຖ້າວ່າເດັກນັ້ນຮາກອອກ.

## ຢາມີແຮງແນວ K (vitamin K) ມີຜົນສະທ້ອນແນວບໍ່ດີຫັຍງບໍ?

ຢາມີແຮງແນວ K (vitamin K) ໄດ້ເອົາໃຫ້ເດັກເກີດໃໝ່ທັງຫຼາຍຢູ່ ອົສເຕຣເລັຍ ຕັ້ງແຕ່ປີ 1980 ແລະທາງອົງການສຸຂະພາບຕ່າງໆຂອງ ອົສເຕຣເລັຍ ເຊື່ອວ່າການສັກຢາມີແຮງແນວ K (vitamin K) ແມ່ນປອດໄພ. ເຖິງແມ່ນວ່າມີການສຶກສາອັນນຶ່ງໄດ້ແນະນຳວ່າມີການກ່ຽວພັນກັນລະຫວ່າງການສັກຢາມີແຮງແນວ K (vitamin K) ກັບໂຣກມະເຮັງໄວຍັງນ້ອຍ, ການສຶກສາອັນອື່ນອີກຫົກອັນຄົ້ນເຫັນບໍ່ມີການກ່ຽວພັນກັນເລີຍ.

**ຂ້າພະເຈົ້າຈຳເປັນຕ້ອງຕົກລົງເອົາ**ຢາມີແຮງແນວ K (vitamin K) ໃຫ້ເດັກເກີດໃໝ່ຂອງຂ້າພະເຈົ້າບໍ? ມັນແມ່ນການຕັດສິນໃຈຂອງທ່ານ. ແຕ່ວ່າທ່ານໝໍທັງຫຼາຍແນະນຳຢ່າງໜັກແໜ້ນວ່າເດັກເກີດໃໝ່ໝົດທຸກໆຄົນຈະຕ້ອງໄດ້ຢາມີແຮງແນວ K (vitamin K). ນີ້ແມ່ນຮວມທັງເດັກເກີດໃໝ່ທັງຫຼາຍທີ່ບໍ່ສະບາຍ ຫຼືວ່າກຳລັງຈະໄດ້ຮັບການຜ່າຕັດ (ຮວມທັງການປາດໜັງຫຸ້ມປາຍເພດຊາຍອອກ). ຜູ້ເປັນພໍ່ແມ່ທັງຫຼາຍທີ່ຕັດສິນໃຈບໍ່ໃຫ້ຢາມີແຮງແນວ K (vitamin K) ຄວນລະມັດລະວັງອາການອັນໃດອັນນຶ່ງຂອງອາການເລືອດອອກບໍ່ຢຸດ VKDB. ເຫຼົ່ານີ້ຮວມມີ:

- ການມີເລືອດອອກຫຼືວ່າການມີຮອຍຊ້ຳໂດຍບໍ່ມີເຫດຜົນ
- ອາການຜິວໜັງເຫຼືອງຫຼືວ່າຕາສອງເບື້ອງຂາວ**ຫຼັງຈາກອາຍຸໄດ້ສາມອາທິດ.**

ເດັກເກີດໃໝ່ທັງຫຼາຍມີອາການເຫຼົ່ານີ້ຄວນໄປຫາທ່ານໝໍ(ເຖິງວ່າພວກເຂົາໄດ້ຮັບຢາມີແຮງ Vitamin K ກໍຕາມ).

## ເປັນຫັຍງເດັກເກີດໃໝ່ທັງຫຼາຍຈຶ່ງຕ້ອງສັກຢາກັນໂຣກຕັບອັກເສບເຊື້ອ B (Hepatitis B)?

ໂຣກຕັບອັກເສບເຊື້ອ B (Hepatitis B) ແມ່ນພະຍາດທີ່ຮ້າຍແຮງເກີດດ້ວຍເຊື້ອ ວາຍຣັດສ໌ ອັນໃດອັນນຶ່ງເຮັດໃຫ້ຕັບນັ້ນເສັຍ. ບາງຄົນທີ່ມີເຊື້ອ ວາຍຣັດສ໌ ອັນນີ້ອາດບໍ່ມີອາການຫັຍງໝົດ ຫຼືວ່າມີອາການຕ່າງໆພຽງເລັກນ້ອຍເທົ່ານັ້ນ. ແຕ່ວ່າຮອດ 25 ເປີເຊັນຂອງຄົນມີອາການນີ້ອາດເປັນພະຍາດຕັບຮ້າຍແຮງດົນໆໄປໃນຊີວິດ, ໂດຍສະເພາະຖ້າວ່າພວກເຂົາຕິດໂຣກຕັບອັກເສບເຊື້ອ B (Hepatitis B) ຕ່ອນຍັງເປັນເດັກຢູ່. ການສັກຢາປ້ອງກັນໂຣກຊ່ວຍປ້ອງກັນເຣື່ອງນີ້.

## ໂຣກຕັບອັກເສບເຊື້ອ B (Hepatitis B) ແຜ່ພາຍໄດ້ຢ່າງໃດ?

ເຊື້ອ ວາຍຣັດສ໌ ນັ້ນອາໄສຢູ່ໃນທາດນ້ຳຂອງຮ່າງກາຍ (ເລືອດ, ນ້ຳລາຍແລະນ້ຳເຊື້ອຜູ້ຊາຍ). ເດັກເກີດໃໝ່ທັງຫຼາຍທີ່ມີຜູ້ເປັນແມ່ມີໂຣກຕັບອັກເສບ**ເຊື້ອ B** (Hepatitis B) ມີການສ່ຽງຫຼວງຫຼາຍທີ່ຈະຕິດກັບພະຍາດນີ້ຕ່ອນເກີດ.

ວິທີທາງອື່ນໆທີ່ໂຣກຕັບອັກເສບ**ເຊື້ອ B** (Hepatitis B) ສາມາດແຜ່ພາຍໄດ້ແມ່ນ

- ຖ້າວ່າເລືອດຈາກຄົນຜູ້ມີໂຣກຜູ້ໃດຜູ້ນຶ່ງມາຖືກກັບເລືອດຂອງທ່ານ. ອັນນີ້ແມ່ນຮວມເອົາ: ທັງການມາຖືກຕ້ອງຜ່ານບາດແຜ ຫຼືວ່າຮອຍຄູດຕ່າງໆ; ການໄປຖືກຕ້ອງກັບເຂັມຫຼືວ່າຫຼອດສັກຢາທີ່ຕິດເຊື້ອໂຣກເວລາສີດຢາມຶນເມົາຕ່າງໆ; ການໄປຖືກຕ້ອງກັບເຄື່ອງມືທີ່ຕິດເຊື້ອໂຣກຕ່າງໆ ເຊັ່ນຈຳພວກໃຊ້ເຈາະບ່ອງຮ່າງກາຍ
- ຜ່ານການຮ່ວມເພດກັນກັບຄົນທີ່ຕິດເຊື້ອຜູ້ໃດຜູ້ນຶ່ງ

## ເປັນຫຍັງຈຶ່ງສັກຢາປ້ອງກັນເດັກເກີດໃໝ່ທັງຫຼາຍຕ່ອນເກີດ?

ມັນສຳຄັນທີ່ຈະຕ້ອງເລີ່ມການສັກຢາປ້ອງກັນໂຣກຕັບອັກເສບ**ເຊື້ອ B** (Hepatitis B) ໄວທີ່ສຸດເທົ່າທີ່ຈະໄວໄດ້ຫຼັງຈາກເກີດ ເພື່ອຄວາມແນ່ນອນວ່າການສັກຢາປ້ອງກັນນັ້ນມີຜົນສະທ້ອນໄວທີ່ສຸດເທົ່າທີ່ຈະໄວໄດ້. **ເດັກເກີດໃໝ່ທັງຫຼາຍຕ້ອງໄດ້ສັກຢາກັນ**ໂຣກຕັບອັກເສບ**ເຊື້ອ B** (Hepatitis B) **ຕື່ມໄປອີກສາມເທື່ອ - ຕ່ອນອາຍຸໄດ້ສອງເດືອນ, ສີ່ເດືອນແລະຫົກຫຼືວ່າ** 12 **ເດືອນ. ການສັກຢາເຫຼົ່ານີ້ເອົາໃຫ້ພ້ອມກັນກັບການສັກຢາກັນໂຣກອື່ນໆຕາມທຳມະດາຂອງໄວເດັກ.**

## ເດັກເກີດໃໝ່ຂອງຂ້າພະເຈົ້າຈະຕ້ອງໄດ້ສັກຢາກັນບໍ?

ມັນແມ່ນການຕັດສິນໃຈຂອງທ່ານ,ແຕ່ວ່າທາງອົງການສຸຂະພາບຕ່າງໆແນະນຳຢ່າງໜັກແໜ້ນວ່າໃຫ້ທຳ.

## ການສັກຢາກັນໂຣກຕັບອັກເສບເຊື້ອ B (Hepatitis B) ເຮັດໃຫ້ມີບັນຫາຕ່າງໆບໍ?

ການມີຜົນແນວເສັຽຫາຍອັນຮ້າຍແຮງຕ່າງໆແມ່ນບໍ່ຄ່ອຍມີ. ບັນຫາຕ່າງໆອັນມີເລື້ອຍໆແມ່ນອາການເຈັບປວດຢູ່ບ່ອນສັກຢາໃຫ້, ອາການໄຂ້ເຫຼັກນ້ອຍແລະເຈັບຕາມຂໍ້. ໄປຫາທ່ານໝໍຂອງທ່ານຖ້າວ່າທ່ານມີຄວາມເປັນຫ່ວງ.

ຖ້າວ່າທ່ານຕ້ອງການຄວາມຊ່ວຍເຫຼືອໃນການໂທລະສັບຕ່າງໆເປັນພາສາອັງກິດ, ໂທຫາບ່ອນບໍລິການແປແລະນາຍພາສາຕາມນຳເບີ 131 450.

ທ່ານສາມາດຊອກເອົາລາຍລະອຽດເພີ່ມເປັນພາສາຂອງທ່ານໄດ້ ຕາມຈຸດວົງການສານຕິດຕໍ່ກັບນາໆວັດທະນະທຳອື່ນໆຢູ່ http://mhcs.health.nsw.gov.au.

ນຳເບີໂທລະສັບຕ່າງໆແມ່ນຖືກຕ້ອງຕ່ອນພິມ ແຕ່ວ່າບໍ່ໄດ້ກວດຄືນໄປເລື້ອຍໆ.
ທ່ານລົມຄວນກວດເບິ່ງນຳເບີຕ່າງໆໃນປຶ້ມໂທລະສັບ.